ຄະນະທິມງານອູ້ມຊູສຸຂະພາບການປະພຶດປະກອບດ້ວຍ
ສະມາຊິກທີ່ມີປະສົບປະການດ້ານວິຊາການໃນ
ການປິ່ນປົວສຸຂະພາບການປະພຶດ,ລວມທັງການ
ເຮັດວຽກນຳບຸກຄົນທີ່ມີການເຈັບປ່ວຍໂຣກຈິດ
ແລະການປະພຶດບໍ່ດີ.

ຖ້າຫາກວ່າທ່ານມີຄົນອາໄສຢູ່ທີ່ມີ
ການປະພຶດບໍ່ດີແລະກຳລັງຕ້ອງການ
ການອູ້ມຊູເພີ້ມເຕີມ,ແຫລ່ງຊ່ວຍ
ເຫລືອ,ແລະແນວຄິດໃຫມ່...

**ພວກເຮົາອາດຈະສາ
ມາດຊ່ວຍເຫລືອໄດ້!**

ພວກເຮົາພູມໃຈທີ່ຈະສະເນີການບໍຣິ
ການເຫລົ່ານີ້ໃຫ້ເພື່ອຈະອູ້ມຊູຜູ້ບໍຣິ
ການທີ່ກຳລັງໃຫ້ການປິ່ນປົວທີ່ມີຄຸນ
ນະພາບສູງໃຫ້ແກ່ບຸກຄົນຜູ້ທີ່ມີ
ຄວາມຕ້ອງການສັບສົນ

ເພື່ອຮາຍຣະອຽດເພີ້ມເຕີມຫລືເພື່ອຈະເຣັດ
ການສິ່ງຕໍ່ໄປຫາ,ຕິດຕໍ່ມາຫາພວກເຮົາໄດ້ທີ່:

ອີເມລ:
RCSBHST@dshs.wa.gov

ໂທຣະສັບ:
(360) 725-3445

Residential Care Services
PO Box 45600
Olympia, WA 98504-5600

*ຣາຍຣະອຽດອັນນີ້ຈະມີໄວ້ໃຫ້ໃນພາສາ
ເພີ້ມເຕີມອີກ;ກະຣຸນາເຫວ່ເຂົ້າຢ້ຽມ:*
www.dshs.wa.gov/altsa/BHSP/

Washington State Department of Social & Health Services
Transforming lives
DSHS 22-1817 LA (5/19) Laotian

ຄະນະທິມງານອູ້ມຊູ ສຸຂະພາບການປະພຶດ

ການບໍຣິການສຳລັບຜູ້ບໍຣິການ

ການບໍຣິການປິ່ນປົວຢູ່ຕາມບ່ອນຢູ່ອາໄສ (RCS)

ໃນຖານະເປັນພາກສ່ວນນຶ່ງຂອງຄວາມພະຍາຍາມ
ທີ່ຈະປ່ຽນແປງຮູບຮ່າງຂອງຊີວິດແລະເພີ້ມການບໍຣິ
ການອີງຕາມຄຸນນຸມຄຸນທີ່ມີໄວ້ໃຫ້ແກ່ລູກຄ້າສຸຂະພາບ
ການປະພຶດ,ການບໍຣິການປິ່ນປົວຢູ່ຕາມບ່ອນຢູ່ອາສັຍ
ໄດ້ກໍ່ຕັ້ງຄະນະທິມງານອູ້ມຊູສຸຂະພາບການປະພຶດ.ບົດ
ບາດຂອງຫນ່ວຍທິມງານນີ້ແມ່ນເພື່ອຈະສະເນີການ
ອູ້ມຊູສຸຂະພາບການປະພຶດໃຫ້ຜູ້ບໍຣິການ.

ການບໍຣິການຂອງຄະນະທິມງານອູ້ມຊູສຸຂະພາບການ
ປະພຶດມີຄວາມສັມພັນນຳກົດຫມາຍປົກຄອງຣັດວໍຊິງຕັນ
(WAC) ເພື່ອຈະຊ່ວຍໃຫ້ສິ່ງເສີມຄຸນນະພາບຂອງການ
ປິ່ນປົວໃຫ້ດີຂຶ້ນແລະການສອດຄ່ອງນຳກົດບັນຍັດຂອງຣັດ.

ການບໍຣິການຕາມສະມັກໃຈຂອງພວກເຮົາຈະມີໄວ້ໃຫ້
ທົ່ວຣັດ.ພວກເຮົາບໍ່ແມ່ນນັກສືບສວນຄຳຮ້ອງທຸກ,ຜູ້ພິຈາ
ຣະນາບິ່ງຫລືຜູ້ອອກໃບອະນຸຍາດ.

ສະມາຊິກຄະນະທິມງານອູ້ມຊູສຸຂະພາບການປະພຶດທຸກໆຄົນແມ່ນຜູ້ລາຍ
ງານທີ່ຕ້ອງໄດ້ຮັດ.

ຈຸດປໍ້າຫມາຍຂອງຄະນະທິມງານອູ້ມຊູສຸຂະພາບ ການປະພຶດລວມເອົາ:

- ອູ້ມຊູຜູ້ບໍຣິການທີ່ເອົາການປິ່ນປົວທີ່ມີຄຸນນະພາບສູງໃຫ້ແກ່ບຸກຄົນ ທີ່ມີຄວາມຕ້ອງການສັບສົນແລະກຳລັງຍ້າຍສະຖານທີ່ໃຫມ່ອອກ ຈາກບ່ອນຈັດໃຫ້ຢູ່ຕາມໂຮງພະຍາບານ
- ຜົນສຳເຣັດທັນທີແລະຣະຍະຍາວສຳລັບບຸກຄົນນຳອຸບປະສັກດ້ານ ການປະພຶດທີ່ກຳລັງຜັນປ່ຽນໄປສູ່ການດຳຣົງຊີວິດໃຫມ່
- ຜູ້ບໍຣິການທີ່ມີຜົນສຳເຣັດທາງກົດຣະບຽບໂດຍການສິ່ງເສີມຄວາມ ອຳນາດພາຍໃນການຈັດໃຫ້ຢູ່ຕາມຄຸນນຸມຄຸນແລະຊ່ວຍເຫລືອຜູ້ ບໍຣິການໃຫ້ບັນລຸຜົນໃນຄວາມຕ້ອງການສະເພາະຢູ່ໃນຄວາມ ພະຍາຍາມສ່ວນບຸກຄົນ,ລວມສູນໃສ່ບຸກຄົນ
- ມຸ່ງຫມັ້ນການປະສານງານທົ່ວຫ້ອງການຕ່າງໆເພື່ອເປັນຜົນສຳ ເຣັດໃນການຍົກຍ້າຍບຸກຄົນຈາກໂຮງພະຍາບານໂຣກຈິດໄປສູ່ ບ່ອນຈັດຫາໃຫ້ຢູ່ຕາມຄຸນນຸມຄຸນ
- ເອົາການຝຶກຝົນທີ່ຕ້ອງການໃຫ້ຢ່າງຄາດຄິດລ່ວງຫນ້າເພື່ອວ່າ ຜູ້ບໍຣິການຈະຮັບໃຊ້ປະຊາຄົນເຫລົ່ານີ້ຢ່າງເປັນຜົນສຳເຣັດ

ການບໍຣິການຕໍ່ລົງໄປນີ້ຈະມີໄວ້ໃຫ້:

ການຝຶກອົບຮົມເປັນກຸ່ມ

ການຝຶກອົບຮົມມຸ່ງຫມາຍໃສ່ເຣື່ອງສຸຂະພາບການປະພຶດໂດຍສະເພາະ, ແນວທາງແລະພາກປະຕິບັດທີ່ດີທີ່ສຸດ.ການຝຶກອົບຮົມສາມາດຖືກເຣັດໃສ່ ຄວາມຕ້ອງການສະເພາະຂອງພະນັກງານຂອງທ່ານ,ຊຸ່ມວ່າຣາຍຣະ ອຽດກ່ຽວກັບວ່າຈະຂຽນແຜນການປິ່ນປົວທີ່ມຸ່ງຫມາຍໃສ່ບຸກຄົນໄດ້ ຢ່າງໃດ,ເຣັດການປະເມີນຜົນເບິ່ງການສ່ຽງອັນຕະຣາຍແລະຢ່າງ ອື່ນໆອີກ.ການຝຶກອົບຮົມສາມາດຖືກເອົາໃຫ້ຢູ່ຕາມສະຖານທີ່ຂອງທ່ານ.

ການປຶກສາທີ່ຕັ້ງໃຈໃສ່

ການປຶກສາສາມາດຖືກເຣັດເພື່ອຈະຊ່ວຍເຫລືອແກ້ໄຂຄວາມຕ້ອງການຂອງ ຄົນອາສັຍຢູ່ຄົນໃດຄົນນຶ່ງສະເພາະຫລືຄວາມຫຍຸ້ງຍາກຂອງສະຖານທີ່.ຕົວ ຢ່າງລວມເອົາການຊອກເບິ່ງບັນຫາການປະພຶດ,ການຂ້ຳເຖິງແຫລ່ງ ຊ່ວຍເຫລືອຕາມຄຸນນຸມຄຸນແລະຢ່າງອື່ນໆ.ການປຶກສາສະມາດຖືກເອົາ ໃຫ້ໄດ້ຢູ່ຕາມສະຖານທີ່ຂອງທ່ານລວມທັງທາງໂທຣະສັບ.

ການຊ່ວຍເຫລືອດ້ານວິຊາການເບື້ອງຕົ້ນ

ສຳລັບຜູ້ບໍຣິການຜູ້ທີ່ກຳລັງພິຈາຣະນາເບິ່ງການຮັບເອົາຜູ້ອາສັຍຢູ່ທີ່ມີ ການປະພຶດບໍ່ດີທີ່ເປັນທີ່ຮູ້ຈັກກັນຢູ່,ຄະນະທິມງານຂອງພວກເຮົາຈະມີ ໄວ້ໃຫ້ເພື່ອຈະເອົາການບໍຣິການດ້ານວິຊາການເບື້ອງຕົ້ນໃຫ້ກ່ອນການ ມາເຖິງບ່ອນຢູ່ອາສັຍຂອງບຸກຄົນນັ້ນ.ອັນນີ້ລວມເອົາໃບໄຕປ໋ຂອງກົດ ຫມາຍ WAC(s) ລ່າສຸດຫມູ່ແລະການຂ້ຳລົມກັນກ່ຽວກັບກົດຣະ ບຽບທີ່ກ່ຽວຂ້ອງນຳຜູ້ອາສັຍຢູ່.